ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------000---------

ກະຊວງແຮງງານ ແລະສະຫວັດດີການສັງຄົມ ເລກທີ :0423 /ອປສ

ອົງການປະກັນສັງຄົມ ນະຄອນຫຼວງວຽງຈັນ,ວັນທີ26/ 9/2011

# ແຈ້ງການ

ເຖິງ: ບັນດາທ່ານ ທີ່ເປັນສະມາຊິກ ໃນລະບົບປະກັນສັງຄົມພາກວິສາຫະກິດ.

ເລື້ອງ: ການເລືອກ-ປ່ຽນໂຮງໝໍປະຈໍາປີ 2012.

- ອີງຕາມດໍາລັດນາຍົກລັດຖະມົນຕີເລກທີ 207/ນຍ,ລົງວັນທີ 23 ທັນວາ,1999 ວ່າດ້ວຍ ລະບອບປະກັນສັງຄົມ ສໍາລັບຜູ້ອອກແຮງງານໃນວິສາຫະກິດ.

ເພື່ອຄວາມສະດວກ ໃນການປ່ຽນ ຫຼືເລືອກໃຊ້ບໍລິການປິ່ນປົວໃນໂຮງໝໍທີ່ເປັນຄູ່ສັນຍາຂອງ ອປສ, **ຜູ້ອໍານວຍການອົງການປະກັນສັງຄົມພາກວິສາຫະກິດ(ອປສ)** ຂໍແຈ້ງເຖິງບັນດາທ່ານ ສະມາຊິກ ອປສ ທີ່ມີຈຸດປະສົງຕ້ອງການເລືອກ ຫຼື ປ່ຽນໂຮງໝໍທີ່ເຄີຍໄດ້ເລືອກໃນປີຜ່ານມາ ສາມາດພົວພັນເອົາແບບຟອມໄດ້ ທີ່ຫ້ອງການປະກັນສັງຄົມ(ອປສ) ຫຼື ເຮັດເປັນບັນຊີລາຍຊື່ ຫຼາຍຄົນ ພ້ອມກັນ ພ້ອມທັງ ລະບຸຊື່ໂຮງໝໍ ທີ່ເຄີຍເລືອກຜ່ານມາ ແລະ ໂຮງໝໍທີ່ຈະເລືອກໃໝ່ຂອງແຕ່ລະຄົນ ແລ້ວນໍາສົ່ງໃຫ້ຫ້ອງການ ອປສ ບໍ່ໃຫ້ກາຍ ວັນທີ 30 **ພະຈິກ 2011** ແລະທ່ານຈະເກີດສິດປິ່ນປົວຢູ່ໂຮງໝໍທີ່ທ່ານເລືອກໃໝ່ ນັບແຕ່ວັນທີ 01 **ມັງກອນ 2012** ເປັນຕົ້ນໄປ

ສໍາລັບລູກຂອງຜູ້ປະກັນຕົນຈະຕ້ອງເລືອກໂຮງໝໍໃດໜຶ່ງນໍາຜູ້ເປັນພໍ່ ຫຼື ແມ່ເທົ່ານັ້ນ ຍົກເວັ້ນກໍລະນີ ມີຄວາມຈໍາເປັນທີ່ລູກບໍ່ໄດ້ອາໄສຢູ່ນໍາພໍ່ຫຼືແມ່ຍ້ອນການສຶກສາ ຫຼືຍ້ອນສາເຫດໃດໜຶ່ງ ສາມາດ ເລືອກ - ແຍກໃຊ້ໂຮງໝໍທີ່ເປັນຄູ່ສັນຍາກັບ ອປສ ຕ່າງຫາກໄດ້, ໃນໄລຍະລໍຖ້າການເກີດສິດປິ່ນປົວຢູ່ໂຮງໝໍເລືອກໃໝ່ ໃຫ້ນໍາໃຊ້ໂຮງໝໍເກົ່າໄປກ່ອນ.

ຮອດປະຈຸບັນນີ້ ອປສ ໄດ້ຂະຫຍາຍການບໍລິການສູ່ໂຮງໝໍເມືອງປາກລາຍ ແລະໂຮງໝໍເມືອງທົ່ງສາ ຂອງແຂວງໄຊຍະບູລີ ສະນັ້ນ,ຜູ້ປະກັນຕົນສາມາດເລືອກໃຊ້ບໍລິການຢູ່ໂຮງໝໍດັ່ງກ່າວໄດ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ໃຫ້ການຮ່ວມມືປະຕິບັດຕາມນີ້ດ້ວຍ.

ຜູ້ອໍານວຍການ ອປສ.

ຄໍາພວງ ອິນທະແສງ

ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ຫ້ອງການປະກັນສັງຄົມພາກວິສາຫະກິດແລະທຸກສາຂາ ອປສ

ໂທຣ: 021 241280-81, 021 243725, 054 790923, 051 250972, 041 253280, 031 214691, 020 55489030